ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 204 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 086/ສພຊ, ລົງວັນທີ 15 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 06/ຄປຈ, ລົງວັນທີ 13 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການຈັດສັນພູມລຳເນົາ ແລະ ອາຊີບ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 086 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ ໃນວາລະກອງປະຊຸມ ຄັ້ງວັນທີ 15 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 45 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍການຈັດສັນ ພູມລຳເນົາ ແລະ ອາຊີບ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ຖືກຕ້ອງ, ສອດຄ່ອງກັບການພັດທະນາ ແລະ ຄວາມເປັນຈິງຂອງທ້ອງຖິ່ນ ຮັບປະກັນໃຫ້ປະຊາຊົນລາວບັນດາເຜົ່າ ທີ່ຢູ່ໃນເຂດການຈັດສັນ ພູມລຳເນົາ ແລະ ອາຊີບ ມີທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ອາຊີບໝັ້ນຄົງ ແນໃສ່ແກ້ໄຂການເຄື່ອນຍ້າຍແບບບໍ່ຖືກຕ້ອງຕາມກົດໝາຍ, ລຶບລ້າງຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ທາງດ້ານວັດຖຸ ແລະ ຈິດໃຈໃຫ້ດີຂຶ້ນກວ່າເກົ່າ, ສ້າງຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສ້າງເປັນບ້ານພັດທະນາ, ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 2 ການຈັດສັນ ພູມລຳເນົາ ແລະ ອາຊີບ**

ການຈັດສັນພູມລຳເນົາ ແມ່ນ ການກຳນົດຂອບເຂດທີ່ຢູ່ອາໄສ, ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນ ນັບທັງຕົວເມືອງ ແລະ ຊົນນະບົດ ທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນໃໝ່ ເພື່ອຮັບປະກັນຄວາມສົມດຸນ ແລະ ສອດຄ່ອງກັບການພັດທະນາ.

ການຈັດສັນອາຊີບ ແມ່ນ ການສ້າງເງື່ອນໄຂ ແລະ ຄວາມອາດສາມາດໃນການທຳມາຫາກິນໃຫ້ແກ່ປະຊາຊົນນັບທັງຕົວເມືອງ ແລະ ຊົນນະບົດ ທີ່ຖືກຫຍັບຍ້າຍ ຫຼື ຍົກຍ້າຍ ຈາກພູມລຳເນົາເດີມ ໄປຕັ້ງພູມລຳເນົາບ່ອນໃໝ່ ເພື່ອໃຫ້ມີແຫຼ່ງລາຍຮັບທີ່ແນ່ນອນ ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພູມລຳເນົາ** ໝາຍເຖິງ ຂອບເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນຂອງປະຊາຊົນ;

2. **ອາຊີບໝັ້ນຄົງ** ໝາຍເຖິງ ກິດຈະກຳໃດໜຶ່ງທີ່ແນ່ນອນ ຊຶ່ງສາມາດລ້ຽງຊີບ ແລະ ສ້າງລາຍຮັບກຸ້ມຕົນເອງ ແລະ ຄອບຄົວໄດ້ຢ່າງຕໍ່ເນື່ອງ;

3. **ການຫຍັບຍ້າຍ** ໝາຍເຖິງ ການຈັດສັນຄືນໃໝ່ເຂດທີ່ຢູ່ອາໄສໃຫ້ປະຊາຊົນ ໃນບ້ານ ຫຼື ເຂດພື້ນທີ່ເດີມ ໃຫ້ເປັນລະບຽບ ແລະ ເໝາະສົມກວ່າເກົ່າ;

4. **ການຍົກຍ້າຍ** ໝາຍເຖິງ ການປ່ຽນແປງທີ່ຢູ່ອາໄສເດີມຂອງຄອບຄົວ ແລະ ບ້ານ ເພື່ອໄປຕັ້ງພູມລຳເນົາ ແລະ ດຳລົງຊີວິດຢູ່ບ່ອນໃໝ່;

5. **ເຈົ້າຂອງໂຄງການ** ໝາຍເຖິງ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ທີ່ໄດ້ຮັບມອບໝາຍຈາກລັດຖະບານ ໃນການຈັດຕັ້ງປະຕິບັດໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ;

6. **ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ** ໝາຍເຖິງ ບັນດາກິດຈະການທີ່ກຳນົດ ປະເພດ, ເຂດ, ພື້ນທີ່ຮອງຮັບ ແລະ ເງື່ອນໄຂການຈັດສັນ ພູມລຳເນົາ ແລະ ອາຊີບ ລວມທັງ ຂັ້ນຕອນ, ວິທີການ, ງົບປະມານ ແລະ ກຳນົດເວລາໃນການຈັດຕັ້ງປະຕິບັດ;

7. **ຜູ້ພັດທະນາໂຄງການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນໃນໂຄງການພັດທະນາໃດໜຶ່ງ;

8. **ໂຄງການພັດທະນາ** ໝາຍເຖິງ ໂຄງການລົງທຶນ ຫຼື ກິດຈະການຕ່າງໆ ທີ່ດຳເນີນການຢູ່ພາຍໃນ ສປປ ລາວ ຊຶ່ງຕ້ອງໄດ້ຈັດສັນ ຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ແລະ ທົດແທນຄ່າເສຍຫາຍ;

9. **ໂຄງລ່າງພື້ນຖານທີ່ຈຳເປັນ** ໝາຍເຖິງ ລະບົບການບໍລິການສາທາລະນະປະໂຫຍດຂັ້ນພື້ນຖານ ເປັນຕົ້ນ ເສັ້ນທາງ, ໄຟຟ້າໃນລະບົບ, ສຸກສາລາ, ນ້ຳສະອາດ, ໂຮງຮຽນ;

10. **ບ້ານເຈົ້າພາບ** ໝາຍເຖິງ ບ້ານ ທີ່ມີປະຊາຊົນອາໄສຢູ່ກ່ອນແລ້ວ ຊຶ່ງມີຜູ້ໄດ້ຮັບຜົນກະທົບຈາກບ່ອນອື່ນ ຍົກຍ້າຍມາອາໄສຢູ່ນຳ;

11. **ຜູ້ໄດ້ຮັບຜົນກະທົບ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ;

12. **ນັກພັດທະນາ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການຝຶກອົບຮົມເຕັກນິກວິຊາການໃດໜຶ່ງທີ່ແນ່ນອນ, ມີຄວາມຊຳນິຊຳນານ ແລະ ໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;

13. **ລາຍຮັບໄລຍະເສຍໂອກາດ** ໝາຍເຖິງ ຄ່າຕອບແທນຈາກການດຳເນີນກິດຈະການໃດໜຶ່ງ ທີ່ຜູ້ໄດ້ຮັບຜົນກະທົບຈາກການຈັດສັນພູມລຳເນົາ ຈະໄດ້ຮັບໄລຍະ ສາມ ປີ;

14. **ເງື່ອນໄຂດຳລົງຊີວິດຂັ້ນພື້ນຖານ** ໝາຍເຖິງ ປັດໄຈພື້ນຖານຂອງການດຳລົງຊີວິດປະຈຳວັນ ຄື ອາຫານການກິນ, ເຄື່ອງນຸ່ງຫົ່ມທີ່ຈຳເປັນ, ທີ່ຢູ່ອາໄສຖາວອນ, ຄວາມສາມາດ ໃຊ້ຈ່າຍເຂົ້າໃນການປິ່ນປົວໃນເວລາເຈັບເປັນ, ການສຶກສາຂັ້ນພື້ນຖານ ແລະ ຄວາມສາມາດ ເຂົ້າເຖິງຕາໜ່າງການບໍລິການສາທາລະນະຂັ້ນພື້ນຖານທີ່ຈຳເປັນ;

15. **ໄລຍະຂ້າມຜ່ານ** ໝາຍເຖິງ ໄລຍະຟື້ນຟູຊີວິດການເປັນຢູ່ ຂອງປະຊາຊົນພາຍໃນເວລາ ສາມ ຫາ ຫ້າປີ ນັບແຕ່ເວລາທີ່ໄດ້ມີການຍົກຍ້າຍອອກຈາກທີ່ຢູ່ອາໄສເດີມ;

16. **ການທົດແທນຄ່າເສຍຫາຍ** ໝາຍເຖິງ ການທົດແທນ ຫຼື ຊົດເຊີຍ ເປັນ ທີ່ດິນ, ວັດຖຸ ຫຼື ເປັນເງິນ ສໍາລັບ ທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກໂຄງການຈັດສັນພູມລໍາເນົາ ແລະ ອາຊີບ ດ້ວຍມູນຄ່າປ່ຽນແທນ ທີ່ກໍານົດໄວ້ແຕ່ລະໄລຍະ;

17. **ມູນຄ່າປ່ຽນແທນ** ໝາຍເຖິງ ມູນຄ່າທີ່ຄິດໄລ່ເປັນ ວັດຖຸ, ເງິນ ຫຼື ທີ່ດິນ ທີ່ຈໍາເປັນຕ້ອງນໍາໃຊ້ເພື່ອປ່ຽນແທນທີ່ດິນ, ສິ່ງປູກສ້າງ, ຜົນລະປູກ, ສັດລ້ຽງ ແລະ ລາຍຮັບ ທີ່ໄດ້ຮັບຜົນກະທົບຈາກການຈັດສັນພູມລໍາເນົາ;

18. **ສິດນໍາໃຊ້ທີ່ດິນຕາມປະເພນີ** ໝາຍເຖິງ ສິດນໍາໃຊ້ທີ່ດິນຂອງ ບຸກຄົນ ຫຼື ລວມບ້ານ ດ້ວຍການບຸກເບີກ, ພັດທະນາ ທີ່ໄດ້ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນເປັນປົກກະຕິ, ເປີດເຜີຍ ຕໍ່ເນື່ອງເປັນເວລາແຕ່ ຊາວ ປີ ຂຶ້ນໄປ ໂດຍບໍ່ມີເອກະສານໃດໆຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ແລະ ທີ່ດິນບ່ອນດັ່ງກ່າວນັ້ນ ບໍ່ຢູ່ໃນເຂດສະຫງວນຂອງລັດ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ

ລັດ ຮັບປະກັນສິດໃນການຕັ້ງພູມລໍາເນົາ ແລະ ປະກອບອາຊີບຂອງປະຊາຊົນ ຕາມລັດຖະທໍາມະນູນ, ກົດໝາຍ ແລະ ຖືເອົາວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ຕິດພັນກັບວຽກງານກໍ່ສ້າງຮາກຖານ, ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເປັນມາດຕະການຍຸດທະສາດ ທີ່ຕ້ອງສຸມໃສ່ຈັດຕັ້ງປະຕິບັດໃນສະເພາະໜ້າ ແລະ ຍາວນານ ແນໃສ່ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

ລັດ ສະໜອງງົບປະມານ, ບຸກຄະລາກອນ ແລະ ວັດຖຸປະກອນ ເຂົ້າໃນວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ໃນແຕ່ລະໄລຍະ.

ລັດ ຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ, ສຶກສາຄົ້ນຄວ້າ, ວິໄຈ ແລະ ປະກອບທຶນໃນວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ.

### ມາດຕາ 5 ຫຼັກການກ່ຽວກັບການຈັດສັນ ພູມລໍາເນົາ ແລະ ອາຊີບ

ການຈັດສັນ ພູມລໍາເນົາ ແລະ ອາຊີບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນ ບົນພື້ນຖານຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ທັນເວລາ ແລະ ຍຸຕິທໍາ;
4. ຮັບປະກັນ ມີພູມລໍາເນົາ, ໂຄງລ່າງພື້ນຖານທີ່ຈໍາເປັນ, ບ່ອນທໍາມາຫາກິນ, ມີນໍ້າໃຊ້ ແລະ ອາຊີບທີ່ໝັ້ນຄົງ, ມີຊີວິດການເປັນຢູ່ທີ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ;
5. ຈັດສັນບໍລິເວນທ້ອງຖິ່ນເດີມ ໃຫ້ສໍາເລັດກ່ອນ ແລ້ວຈຶ່ງຈັດສັນໄປທ້ອງຖິ່ນອື່ນ ໂດຍຮັບປະກັນຄວາມສົມດຸນລະຫວ່າງ ຈໍານວນຄົນກັບພື້ນທີ່ຕົວຈິງ;
6. ມີການປະສານສົມທົບ, ປຶກສາຫາລື ແລະ ເຂົ້າຮ່ວມຂອງປະຊາຊົນ, ການຈັດຕັ້ງຂອງລັດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງແຕ່ຫົວທີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ຍົກລະດັບຄວາມຮູ້ທາງດ້ານວິຊາການ, ວິທະຍາສາດ ເຕັກໂນໂລຊີ ແລະ ຍາດແຍ່ງ ການສະໜັບສະໜູນ ເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ປະຕິບັດຕາມ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ

**ມາດຕາ 8 ຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ**

ຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ ແມ່ນ ການກຳນົດ ນະໂຍບາຍ, ທິດທາງລວມ, ແຜນງານ ແລະ ໂຄງການທີ່ຢູ່ໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໂດຍຕິດພັນກັບວຽກງານຄຸ້ມຄອງການເຄື່ອນຍ້າຍຂອງພົນລະເມືອງ ແລະ ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ໄດ້ໂດຍພື້ນຖານ ໂດຍສຸມໃສ່ເຂດການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອຮັບປະກັນຄວາມສົມດຸນລະຫວ່າງ ຈຳນວນປະຊາກອນ ຫຼື ກຳລັງແຮງງານກັບພື້ນທີ່, ສົ່ງເສີມໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີແຫຼ່ງລາຍຮັບທີ່ແນ່ນອນ ແລະ ສອດຄ່ອງກັບການພັດທະນາໃນແຕ່ລະໄລຍະ.

**ມາດຕາ 9 ການສ້າງຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ**

ກະຊວງກະສິກຳ ແລະ ປ່າໄມ້ ສ້າງຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ ໂດຍປະສານສົມທົບກັບກະຊວງ ພາຍໃນ, ແຜນການ ແລະ ການລົງທຶນ, ການເງິນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ໂຍທາທິການ ແລະ ຂົນສົ່ງ, ແຮງງານ ແລະ ສະຫວັດດີການສັງຄົມ, ສຶກສາທິການ ແລະ ກິລາ, ສາທາລະນະສຸກ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ສັງຄົມແຫ່ງຊາດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສະຖາບັນການສຶກສາ, ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ພິຈາລະນາ ແລ້ວສະເໜີຕໍ່ ສະພາແຫ່ງຊາດ ພິຈາລະນາຮັບຮອງ.

**ມາດຕາ 10 ເນື້ອໃນຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ**

ຍຸດທະສາດການຈັດສັນ ພູມລຳເນົາ ແລະ ອາຊີບ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຜ່ານມາ;
2. ທິດທາງລວມ, ຄາດໝາຍສູ້ຊົນ ແລະ ເປົ້າໝາຍ ໃນແຕ່ລະໄລຍະ;

3. ຈຸດສຸມການຈັດສັນ ພູມລຳເນົາ ແລະ ອາຊີບ;

4. ນະໂຍບາຍ, ມາດຕະການ ແລະ ກົນໄກການຈັດຕັ້ງປະຕິບັດ;

5. ລະບົບການຕິດຕາມ ແລະ ປະເມີນຜົນ;

6. ງົບປະມານ.

# ພາກທີ III
# ການຈັດສັນພູມລຳເນົາ
## ໝວດທີ 1
## ປະເພດ, ເຂດ ແລະ ເງື່ອນໄຂຜູ້ໄດ້ຮັບການຈັດສັນພູມລຳເນົາ

**ມາດຕາ 11 ປະເພດການຈັດສັນພູມລຳເນົາ**

ການຈັດສັນພູມລຳເນົາ ມີ ສອງປະເພດ ດັ່ງນີ້:

1. ການຈັດສັນທົ່ວໄປ;

2. ການຈັດສັນສະເພາະ.

ການຈັດສັນທົ່ວໄປ ແມ່ນ ການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນທີ່ຢູ່ໃນເຂດທຸລະກັນດານ ແລະ ຂາດເງື່ອນໄຂການພັດທະນາ, ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ, ເຂດທີ່ມີລັກສະນະພິເສດ ຊຶ່ງແມ່ນ ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ການຈັດສັນສະເພາະ ແມ່ນ ການກຳນົດເຂດທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນ ໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການພັດທະນາ ຊຶ່ງແມ່ນ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຜູ້ພັດທະນາໂຄງການ ເປັນຜູ້ຈັດຕັ້ງປະຕິບັດ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 12 ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົາ**

ເຂດທີ່ຈະໄດ້ຮັບການຈັດສັນພູມລຳເນົາ ມີ ດັ່ງນີ້:

1. ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ;

2. ເຂດທີ່ມີຄວາມສ່ຽງໃນການດຳລົງຊີວິດ;

3. ເຂດທີ່ມີລັກສະນະພິເສດ;

4. ເຂດທີ່ຖືກໂຄງການພັດທະນາ.

**ມາດຕາ 13 ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ**

ເຂດທຸລະກັນດານ ແລະ ບໍ່ມີເງື່ອນໄຂໃນການພັດທະນາ ມີ ດັ່ງນີ້:

1. ເຂດທີ່ບໍ່ມີບ່ອນທຳການຜະລິດ ຫຼື ມີໜ້ອຍເກີນໄປ, ຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ບໍ່ມີເງື່ອນໄຂໃນການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນ;

2. ເຂດຫ່າງໄກສອກຫຼີກທີ່ບໍ່ມີເງື່ອນໄຂ ຫຼື ມີຄວາມຫຍຸ້ງຍາກ ໃນການພັດທະນາ ເຊັ່ນ ເຂດພູຜາປ່າເລິກ, ປ່າຍອດນໍ້າ, ມີຄວາມຫຍຸ້ງຍາກໃນການເຂົ້າເຖິງລະບົບການບໍລິການທາງດ້ານສາທາລະນະ;

3. ບ້ານນ້ອຍກະແຈກກະຈາຍ, ເປັນກຸ່ມຄົນທີ່ດໍາລົງຊີວິດແບບເລື່ອນລອຍ ທຸກຍາກ.

**ມາດຕາ 14 ເຂດທີ່ມີຄວາມສ່ຽງໃນການດໍາລົງຊີວິດ**

ເຂດທີ່ມີຄວາມສ່ຽງໃນການດໍາລົງຊີວິດ ມີ ດັ່ງນີ້:

1. ເຂດທີ່ມີໄພພິບັດເລື້ອຍໆ ເປັນຕົ້ນ ເຂດທີ່ມີນໍ້າຖ້ວມ, ເຂດທີ່ມີການເຊາະເຈື່ອນ;

2. ເຂດທີ່ບໍ່ຮັບປະກັນດ້ານຄວາມປອດໄພ ເປັນຕົ້ນ ພະຍາດລະບາດ, ມົນລະພິດ, ຜົນກະທົບດ້ານສິ່ງແວດລ້ອມ.

**ມາດຕາ 15 ເຂດທີ່ມີລັກສະນະພິເສດ**

ເຂດທີ່ມີລັກສະນະພິເສດ ແມ່ນ ເຂດຍຸດທະສາດດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດຊາຍແດນ, ປ່າສະຫງວນ, ປ່າປ້ອງກັນ, ມີທາດເບື່ອ ຫຼື ເຂດທີ່ມີກໍາມັນຕະພາບລັງສີ ແລະ ແຫຼ່ງວັດຖຸບູຮານ.

**ມາດຕາ 16 ເຂດທີ່ຖືກໂຄງການພັດທະນາ**

ເຂດທີ່ຖືກໂຄງການພັດທະນາ ແມ່ນ ເຂດທີ່ໄດ້ຮັບຜົນກະທົບຈາກ ໂຄງການກໍ່ສ້າງເຂື່ອນໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ, ເຂດເສດຖະກິດພິເສດ, ເຂດກໍ່ສ້າງໂຄງລ່າງພື້ນຖານ ແລະ ໂຄງການອື່ນ.

**ມາດຕາ 17 ເງື່ອນໄຂຜູ້ຈະໄດ້ຮັບການຈັດສັນພູມລໍາເນົາ**

ຜູ້ຈະໄດ້ຮັບການຈັດສັນພູມລໍາເນົາ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນພົນລະເມືອງລາວ, ຊາວຕ່າງດ້າວ ແລະ ຄົນບໍ່ມີສັນຊາດທີ່ອາໄສ ຢູ່ ສປປ ລາວ ຖາວອນ ຖືກຕ້ອງຕາມກົດໝາຍ;

2. ຢູ່ໃນເຂດທີ່ໄດ້ຮັບການຈັດສັນພູມລໍາເນົາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 12 ຂອງກົດໝາຍສະບັບນີ້;

3. ເຫັນດີຮັບເອົາການຈັດສັນພູມລໍາເນົາ.

## ໝວດທີ 2
## ເຂດພື້ນທີ່ ແລະ ເງື່ອນໄຂ ຮອງຮັບການຈັດສັນພູມລໍາເນົາ

**ມາດຕາ 18 ເຂດພື້ນທີ່ຮອງຮັບການຈັດສັນພູມລໍາເນົາ**

ເຂດພື້ນທີ່ຮອງຮັບການຈັດສັນພູມລໍາເນົາ ມີ ດັ່ງນີ້:

1. ເຂດບໍລິເວນພື້ນທີ່ເດີມ ທີ່ມີເງື່ອນໄຂຕັ້ງທີ່ຢູ່ອາໄສ, ມີທີ່ດິນ ເພື່ອທໍາການຜະລິດ ແລະ ເພື່ອການພັດທະນາ;

2. ເຂດພື້ນທີ່ເປົ່າວ່າງ ຫຼື ປ່ອຍປະໃຫ້ເປັນເຮື້ອ ຊຶ່ງສາມາດບຸກເບີກ, ຟື້ນຟູໃຫ້ເປັນບ່ອນຕັ້ງທີ່ຢູ່ອາໄສ ແລະ ທຳມາຫາກິນ;

3. ເຂດພື້ນທີ່ ທີ່ສາມາດບຸກເບີກ ແລະ ຈັດສັນເປັນເຂດຈຸດສຸມພັດທະນາ, ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ;

4. ເຂດພື້ນທີ່ ທີ່ຕ້ອງການແຮງງານ ເປັນຕົ້ນ ເຂດໂຮງງານອຸດສາຫະກຳ, ເຂດເສດຖະກິດພິເສດ, ເຂດປູກໄມ້ ຫຼື ພືດອຸດສາຫະກຳ;

5. ເຂດພື້ນທີ່ຈັດສັນພິເສດ ໃຫ້ຄອບຄົວ ແລະ ບ້ານ ເຮັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປົກປັກຮັກສາຊັບສິນບັດ ແລະ ຊັບພະຍາກອນຂອງຊາດ ເປັນຕົ້ນ ເຂດບໍລິເວນຊາຍແດນລະຫວ່າງປະເທດ, ເຂດປ່າສະຫງວນ, ເຂດແຫຼ່ງແຮ່ທາດທີ່ມີຄ່າສູງ, ແຫຼ່ງວັດຖຸບູຮານ.

**ມາດຕາ 19 ເງື່ອນໄຂເຂດພື້ນທີ່ຮອງຮັບການຈັດສັນພູມລຳເນົາ**

ເຂດພື້ນທີ່ຮອງຮັບການຈັດສັນພູມລຳເນົາ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພື້ນທີ່ບ້ານເດີມທີ່ສາມາດຮອງຮັບການຂະຫຍາຍບ່ອນຢູ່ອາໄສ ແລະ ບ່ອນທຳມາຫາກິນໄດ້ຕື່ມອີກ;
2. ເປັນພື້ນທີ່ໃໝ່ທີ່ສາມາດຮອງຮັບ ແລະ ເໝາະສົມໃຫ້ແກ່ການຕັ້ງທີ່ຢູ່ອາໄສ, ບ່ອນທຳມາຫາກິນ ແລະ ການຂະຫຍາຍຕົວຂອງປະຊາກອນຢ່າງຍາວນານ;
3. ເປັນພື້ນທີ່ ທີ່ເໝາະສົມແກ່ການພັດທະນາໂຄງລ່າງພື້ນຖານ;
4. ເປັນພື້ນທີ່ ທີ່ມີແຫຼ່ງນ້ຳ ສຳລັບການບໍລິໂພກ, ອຸປະໂພກ ແລະ ຮັບໃຊ້ການຜະລິດຢ່າງພຽງພໍ;
5. ເປັນພື້ນທີ່ ທີ່ເອື້ອອຳນວຍໃຫ້ແກ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເປັນພື້ນທີ່ທີ່ບໍ່ມີຄວາມສ່ຽງຕໍ່ການດຳລົງຊີວິດ ແລະ ບໍ່ທຳລາຍສິ່ງແວດລ້ອມ.

## ໝວດທີ 3
## ຂັ້ນຕອນການຈັດສັນພູມລຳເນົາ

**ມາດຕາ 20 ຂັ້ນຕອນການຈັດສັນພູມລຳເນົາ**

ການຈັດສັນພູມລຳເນົາ ໃຫ້ດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ການສຶກສາຄົ້ນຄວ້າໂຄງການ ແລະ ວາງແຜນການຈັດສັນພູມລຳເນົາ;
2. ການທົດແທນຄ່າເສຍຫາຍຈາກການຈັດສັນພູມລຳເນົາ;
3. ການກໍ່ສ້າງໂຄງລ່າງພື້ນຖານຮອງຮັບການຈັດສັນພູມລຳເນົາ;
4. ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ;
5. ການພັດທະນາເຂດຈັດສັນພູມລຳເນົາ;
6. ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ;
7. ການມອບ-ຮັບໂຄງການຈັດສັນພູມລຳເນົາ;
8. ການສິ້ນສຸດໂຄງການຈັດສັນພູມລຳເນົາ.

**ມາດຕາ 21 ການສຶກສາຄົ້ນຄວ້າໂຄງການ ແລະ ວາງແຜນການຈັດສັນພູມລຳເນົາ**

ການສຶກສາຄົ້ນຄວ້າໂຄງການຈັດສັນພູມລຳເນົາ ປະກອບດ້ວຍ ການສຶກສາເບື້ອງຕົ້ນ, ການສຶກສາຄວາມເປັນໄປໄດ້ ແລະ ການສຶກສາລະອຽດ.

ການສຶກສາເບື້ອງຕົ້ນ ແມ່ນ ການສຶກສາຂໍ້ມູນດ້ານເສດຖະກິດ, ວັດທະນະທຳ, ສັງຄົມ, ປະຊາກອນ ແລະ ລະບົບການບໍລິການສາທາລະນະຂອງບ້ານເປົ້າໝາຍທີ່ຈະຫຍັບຍ້າຍ ຫຼື ຍົກຍ້າຍ ລວມທັງລັກສະນະພູມສັນຖານຂອງພື້ນທີ່ຮອງຮັບການຈັດສັນ ເພື່ອກ້າວໄປເຖິງການສຶກສາຄວາມເປັນໄປໄດ້.

ການສຶກສາຄວາມເປັນໄປໄດ້ ແມ່ນ ການສຶກສາຕາມຫຼັກການທາງດ້ານວິຊາການ ຢ່າງເປັນລະບົບຄົບຊຸດ ເປັນຕົ້ນ ການສຳຫຼວດທີ່ດິນ, ຊັບສິນ, ແຜນການກໍ່ສ້າງບ້ານໃໝ່, ຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມ.

ການສຶກສາລະອຽດ ແມ່ນ ການສຶກສາຂໍ້ມູນຢ່າງລະອຽດຮອບດ້ານ ແລະ ປະເມີນມູນຄ່າໂຄງການເບື້ອງຕົ້ນ ລວມທັງປະເມີນປະສິດທິຜົນຂອງໂຄງການ.

ການສຶກສາຄົ້ນຄວ້າໂຄງການຈັດສັນພູມລຳເນົາ ປະເພດການຈັດສັນທົ່ວໄປ ແມ່ນ ເຈົ້າຂອງໂຄງການເປັນຜູ້ດຳເນີນການແລ້ວ ວາງແຜນການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອສະເໜີຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນຂອງຕົນ ພິຈາລະນາ.

ສຳລັບ ການສຶກສາຄົ້ນຄວ້າໂຄງການຈັດສັນພູມລຳເນົາ ປະເພດການຈັດສັນສະເພາະ ແມ່ນ ຜູ້ພັດທະນາໂຄງການ ເປັນຜູ້ດຳເນີນການ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ແລ້ວວາງແຜນການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອສະເໜີຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນຂອງຕົນ ພິຈາລະນາ.

**ມາດຕາ 22 ການທົດແທນຄ່າເສຍຫາຍຈາກການຈັດສັນພູມລຳເນົາ**

ການຈັດສັນພູມລຳເນົາ ສຳລັບປະເພດການຈັດສັນທົ່ວໄປ ໃຫ້ປະຕິບັດຕາມແຜນການຈັດສັນຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ທີ່ໄດ້ຜ່ານການຮັບຮອງຢ່າງເປັນທາງການ ໂດຍສອດຄ່ອງກັບກົດໝາຍ.

ການທົດແທນຄ່າເສຍຫາຍ ຈາກການຈັດສັນພູມລຳເນົາ ສຳລັບປະເພດການຈັດສັນສະເພາະ ໃຫ້ປະຕິບັດດັ່ງນີ້:

1. ຜູ້ໄດ້ຮັບຜົນກະທົບ ທີ່ມີເອກະສານກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນທັງໝົດ ຫຼື ບາງສ່ວນ ແລະ ທີ່ດິນທີ່ຍັງເຫຼືອ ກໍບໍ່ສາມາດນຳໃຊ້ໄດ້ນັ້ນ ຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ ດ້ວຍການຈັດສັນທີ່ດິນບ່ອນໃໝ່ທົດແທນ ຕາມມູນຄ່າປ່ຽນແທນທີ່ກຳນົດໄວ້ແຕ່ລະໄລຍະ ແລະ ໄດ້ຮັບເອກະສານກ່ຽວກັບສິດນຳໃຊ້ທີ່ດິນຕອນນັ້ນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ເພື່ອໃຫ້ໄດ້ຮັບເອກະສານດັ່ງກ່າວ. ໃນກໍລະນີ ບໍ່ສາມາດຈັດສັນທີ່ດິນທີ່ເໝາະສົມທົດແທນໃຫ້ ຫຼື ທີ່ດິນນັ້ນ ມີມູນຄ່າປ່ຽນແທນໜ້ອຍກວ່າມູນຄ່າທີ່ດິນ ທີ່ຜູ້ໄດ້ຮັບຜົນກະທົບສູນເສຍ ຕ້ອງໄດ້ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ກ່ຽວດ້ວຍຮູບການອື່ນ ຕາມມູນຄ່າປ່ຽນແທນ;

2. ໃນກໍລະນີ ມູນຄ່າທີ່ດິນ ແລະ ເຮືອນ ຂອງຜູ້ໄດ້ຮັບຜົນກະທົບນັ້ນ ຫາກຕໍ່າກວ່າມູນຄ່າທີ່ດິນ ແລະ ເຮືອນ ທີ່ຈະຈັດສັນໃຫ້ໃໝ່ ໃຫ້ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ພິຈາລະນາແກ້ໄຂ ຕາມຄວາມເໝາະສົມ;

3. ຜູ້ໄດ້ຮັບຜົນກະທົບ ທີ່ມີເອກະສານ ກ່ຽວກັບສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນພຽງສ່ວນໜຶ່ງ ແລະ ທີ່ດິນສ່ວນທີ່ຍັງເຫຼືອ ກໍຍັງສາມາດນຳໃຊ້ໄດ້ນັ້ນ ໃຫ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າປ່ຽນແທນທີ່ຄິດໄລ່ໄວ້. ສ່ວນທີ່ດິນທີ່ຍັງເຫຼືອ ຕ້ອງໄດ້ຮັບເອກະສານຢັ້ງຢືນສິດນຳໃຊ້;

4. ຜູ້ໄດ້ຮັບຜົນກະທົບທີ່ໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ຫາກສູນເສຍສິດ ໂດຍໄດ້ຮັບການຢັ້ງຢືນຈາກອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ຕ້ອງໄດ້ຮັບການທົດແທນຄ່າເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຂອງມາດຕານີ້;

5. ຜູ້ໄດ້ຮັບຜົນກະທົບທີ່ບໍ່ມີເອກະສານ ກ່ຽວກັບສິດນຳໃຊ້ທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2 ແລະ 3 ຂອງມາດຕານີ້ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍຕໍ່ການສູນເສຍທີ່ດິນດັ່ງກ່າວ, ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ຕໍ່ການສູນເສຍສິ່ງປຸກສ້າງ, ຕົ້ນໄມ້ ແລະ ຜົນລະປູກ ຕາມມູນຄ່າປ່ຽນແທນທີ່ຄິດໄລ່ໄວ້;

6. ການສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ທີ່ເປັນເຈົ້າກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນ ສຳລັບວັດຖຸກໍ່ສ້າງທີ່ຍັງເຫຼືອ;

7. ທີ່ດິນ ຫຼື ສິ່ງປຸກສ້າງ ທີ່ໄດ້ຢຸດການນຳໃຊ້ຊົ່ວຄາວ ຕ້ອງໄດ້ທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ຕາມແຕ່ລະກໍລະນີ ພ້ອມທັງຮັບປະກັນ ໃນການສົ່ງຄືນທີ່ດິນ ຫຼື ສິ່ງປຸກສ້າງ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບໃນສະພາບເດີມ;

8. ການສູນເສຍຕົ້ນໄມ້, ຜົນລະປູກ, ສັດລ້ຽງ ຫຼື ລາຍຮັບໄລຍະເສຍໂອກາດ ຕ້ອງທົດແທນຄ່າເສຍຫາຍດ້ວຍມູນຄ່າປ່ຽນແທນ;

9. ການສູນເສຍໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆແກ່ຊຸມຊົນ ຕ້ອງໄດ້ປົວແປງຄືນ ໃຫ້ຢູ່ໃນສະພາບຄ້າຍຄືເກົ່າ ຫຼື ດີກວ່າເກົ່າ ແລະ ຕ້ອງເອົາໃຈໃສ່ເປັນພິເສດ ຖ້າຫາກເປັນການສູນເສຍໂຄງລ່າງພື້ນຖານທາງດ້ານວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງທ້ອງຖິ່ນ. ສຳລັບ ປ່າຊ້າ, ທາດອັດຖິ, ຂຸມຝັງສົບ ຫາກຖືກຜົນກະທົບ ແລະ ຕ້ອງໄດ້ຍ້າຍໄປບ່ອນໃໝ່ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ຕາມຄວາມເປັນຈິງ ບົນພື້ນຖານການປຶກສາຫາລື ກັບຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

10. ການປະຕິບັດການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ບໍ່ວ່າໃນກໍລະນີໃດກໍຕາມ ຕ້ອງໄດ້ປະສານສົມທົບກັບຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງ ຕາມແຜນການທົດແທນຄ່າເສຍຫາຍ;

11. ຜູ້ໄດ້ຮັບຜົນກະທົບ ທີ່ພໍໃຈຍົກຍ້າຍໄປຢູ່ບ່ອນອື່ນ ທີ່ລັດບໍ່ໄດ້ຈັດສັນໃຫ້ ໂດຍໄດ້ຮັບການອະນຸຍາດ ຈະບໍ່ໄດ້ຮັບການຈັດສັນພູມລຳເນົາ ແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍ;

12. ກິດຈະການ ທີ່ດຳເນີນພາຍຫຼັງວັນຂຶ້ນທະບຽນ ສິດຂອງຜູ້ໄດ້ຮັບຜົນກະທົບນັ້ນ ຈະບໍ່ໄດ້ຮັບການທົດແທນຄ່າເສຍຫາຍ ຍົກເວັ້ນໃນກໍລະນີ ແຜນການທົດແທນຄ່າເສຍຫາຍ ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນຂໍ້ 13 ຂອງມາດຕານີ້;

13. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຕ້ອງມີການປະເມີນຄືນໃໝ່ມູນຄ່າທົດແທນຄ່າເສຍຫາຍ ໂດຍການມີສ່ວນຮ່ວມຂອງຜູ້ໄດ້ຮັບຜົນກະທົບ ຖ້າຫາກເຫັນວ່າແຜນການທົດແທນຄ່າເສຍຫາຍ ບໍ່ໄດ້ຮັບການຈັດຕັ້ງປະຕິບັດພາຍໃນ ສິບສອງ ເດືອນ;

14. ການປະຕິບັດແຜນການທົດແທນຄ່າເສຍຫາຍ ຕ້ອງສຳເລັດພາຍໃນ ຊາວສີ່ ເດືອນ ນັບແຕ່ວັນແຜນການດັ່ງກ່າວ ໄດ້ຖືກຮັບຮອງເອົາຢ່າງເປັນທາງການ. ຖ້າຫາກບໍ່ສຳເລັດການທົດແທນຄ່າເສຍຫາຍ ພາຍໃນໄລຍະເວລາທີ່ກຳນົດໄວ້, ຜູ້ພັດທະນາໂຄງການ ຕ້ອງສະເໜີ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ພິຈາລະນາ ຕໍ່ເວລາເພີ່ມຕື່ມແຕ່ບໍ່ໃຫ້ເກີນ ສິບສອງ ເດືອນ.

**ມາດຕາ 23 ການກໍ່ສ້າງໂຄງລ່າງພື້ນຖານຮອງຮັບການຈັດສັນພູມລຳເນົາ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງກໍ່ສ້າງ ແລະ ພັດທະນາລະບົບໂຄງລ່າງພື້ນຖານທີ່ຈຳເປັນໃຫ້ສຳເລັດກ່ອນ ເພື່ອຮອງຮັບການຈັດສັນພູມລຳເນົາຕົວຈິງ ຕາມແຜນການທີ່ຖືກຮັບຮອງຢ່າງເປັນທາງການ.

**ມາດຕາ 24 ການດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຈັດສັນພູມລຳເນົາ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບກັບຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແຕ່ລະຂັ້ນທີ່ກ່ຽວຂ້ອງ ເພື່ອດຳເນີນການຫຍັບຍ້າຍ ຫຼື ຍົກຍ້າຍ ຕົວຈິງ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຮັບປະກັນໃຫ້ໄປຕາມພື້ນທີ່ ແລະ ກຳນົດເວລາທີ່ໄດ້ກຳນົດໄວ້ໃນແຜນການຈັດສັນ ຫຍັບຍ້າຍ ຫຼື ຍົກຍ້າຍ ທີ່ຖືກຮັບຮອງຢ່າງເປັນທາງການ;
2. ເຄົາລົບວັດທະນະທຳ, ສາສະໜາ, ຮີດຄອງປະເພນີອັນດີງາມ ແລະ ຄວາມເຊື່ອຖື ຂອງທ້ອງຖິ່ນ;
3. ຫຼຸດຜ່ອນຜົນກະທົບຕໍ່ບ້ານເຈົ້າພາບ ພ້ອມທັງຮັບປະກັນໃຫ້ປະຊາຊົນທີ່ຢູ່ມາກ່ອນ ສາມາດນຳໃຊ້ໂຄງລ່າງພື້ນຖານຂອງຊຸມຊົນທີ່ລັດ ຫຼື ຜູ້ພັດທະນາໂຄງການຈັດສັນໃຫ້.

ໃນກໍລະນີ ຜ່ານການປະເມີນຕີລາຄາ ຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ເຫັນວ່າບໍ່ປະຕິບັດຕາມແຜນທີ່ໄດ້ກຳນົດໄວ້ພາຍໃນ ສິບສອງ ເດືອນ ພາຍຫຼັງຂຶ້ນທະບຽນສິດຂອງຜູ້ໄດ້ຮັບຜົນກະທົບແລ້ວໃຫ້ປະຕິບັດ ດັ່ງນີ້:

1. ຜູ້ພັດທະນາໂຄງການດັ່ງກ່າວຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ;
2. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຕ້ອງພິຈາລະນາຕົກລົງ ເອົາຜູ້ພັດທະນາໂຄງການໃໝ່; ຖ້າຜູ້ພັດທະນາໂຄງການເກົ່າ ຫາກຕ້ອງການສືບຕໍ່ ໃຫ້ສະເໜີຕໍ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອພິຈາລະນາ;
3. ຜູ້ພັດທະນາໂຄງການ ທີ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ໄດ້ຕົກລົງເລືອກເອົາ ຕ້ອງປັບປຸງແຜນການຫຍັບຍ້າຍ ຫຼື ຍົກຍ້າຍຄືນໃໝ່ ແລ້ວນຳສະເໜີ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ພິຈາລະນາຮັບຮອງ.

**ມາດຕາ 25 ການພັດທະນາເຂດຈັດສັນພູມລຳເນົາ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງພັດທະນາເຂດຈັດສັນພູມລຳເນົາ ໃຫ້ຖືກຕ້ອງສອດຄ່ອງກັບຫຼັກການ ດັ່ງນີ້:

1. ປະຕິບັດຕາມແຜນການພັດທະນາເຂດຈັດສັນ ທີ່ຖືກຮັບຮອງຢ່າງເປັນທາງການ;

2. ຮັບປະກັນໃຫ້ການກໍ່ສ້າງໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ຖືກຕ້ອງຕາມມາດຕະຖານເຕັກນິກຂອງຂະແໜງການທີ່ກ່ຽວຂ້ອງ;

3. ພັດທະນາເຂດຈັດສັນພູມລຳເນົາຢ່າງຮອບດ້ານ ເພື່ອສ້າງເປັນບ້ານພັດທະນາ ແລະ ສ້າງບ້ານໃຫຍ່ກາຍເປັນຕົວເມືອງໃນຊົນນະບົດ.

**ມາດຕາ 26 ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນໃນໄລຍະຂ້າມຜ່ານ ແລະ ຕ້ອງຮັບປະກັນ ດັ່ງນີ້:

1. ໃຫ້ການຊ່ວຍເຫຼືອໃນໄລຍະຂ້າມຜ່ານ ຕາມແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ເປັນຕົ້ນ ຕອບສະໜອງດ້ານສະບຽງອາຫານ, ເຄື່ອງອຸປະໂພກ ແລະ ບໍລິໂພກທີ່ຈຳເປັນ;

2. ປະກອບ ຫຼື ສະໜອງອຸປະກອນທີ່ຈຳເປັນໃນການຜະລິດ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ.

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງເອົາໃຈໃສ່ເປັນພິເສດໃນການຟື້ນຟູຊີວິດການເປັນຢູ່ ຂອງກຸ່ມຄົນທີ່ບໍ່ສາມາດຊ່ວຍຕົນເອງໄດ້ ເພື່ອໃຫ້ຫຼຸດພົ້ນຈາກຄວາມທຸກຍາກ.

**ມາດຕາ 27 ການມອບ-ຮັບໂຄງການຈັດສັນພູມລຳເນົາ**

ສຳລັບໂຄງການຈັດສັນປະເພດສະເພາະ ພາຍຫຼັງສຳເລັດການກໍ່ສ້າງໂຄງການແລ້ວ ຜູ້ພັດທະນາໂຄງການສະເໜີໃຫ້ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ໃນຂັ້ນທີ່ກ່ຽວຂ້ອງ ດຳເນີນການກວດກາມາດຕະຖານເຕັກນິກ ແລະ ຄຸນນະພາບຂອງໂຄງການ ເພື່ອມອບ-ຮັບໂຄງການ.

ຜູ້ພັດທະນາໂຄງການ ຕ້ອງວາງເງິນຄ້ຳປະກັນຈຳນວນ ສິບສ່ວນຮ້ອຍ ຂອງມູນຄ່າໂຄງການຈັດສັນພູມລຳເນົາ ໄວ້ຢູ່ທະນາຄານໃດໜຶ່ງ ຢູ່ ສປປ ລາວ ໂດຍມີການຢັ້ງຢືນຈາກເຈົ້າຂອງໂຄງການ.

ກຳນົດເວລາການຄ້ຳປະກັນໂຄງການຈັດສັນພູມລຳເນົາ ຢ່າງໜ້ອຍ ໜຶ່ງ ປີ ນັບແຕ່ວັນມອບ-ຮັບໂຄງການເປັນຕົ້ນໄປ. ໃນໄລຍະເວລາດັ່ງກ່າວ ຫາກເຫັນວ່າມີສິ່ງບົກພ່ອງ ໃນການພັດທະນາໂຄງການ ເຈົ້າຂອງໂຄງການມີສິດທວງໃຫ້ຜູ້ພັດທະນາໂຄງການ ຮັບຜິດຊອບປັບປຸງແກ້ໄຂສ້ອມແປງຄືນ.

**ມາດຕາ 28 ການສິ້ນສຸດ ໂຄງການຈັດສັນພູມລຳເນົາ**

ໂຄງການຈັດສັນພູມລຳເນົາ ສຳລັບປະເພດການຈັດສັນສະເພາະ ຈະສິ້ນສຸດພາຍຫຼັງ ທີ່ຜູ້ພັດທະນາໂຄງການ ໄດ້ສຳເລັດໄລຍະຄ້ຳປະກັນ. ໃນກໍລະນີມີການເປ່ເພເສຍຫາຍ ທີ່ເກີດຈາກຄວາມບົກພ່ອງທາງດ້ານເຕັກນິກຕ້ອງໄດ້ສ້ອມແປງຄືນ ແລະ ໄດ້ຮັບການຢັ້ງຢືນຈາກ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ.

ເຈົ້າຂອງໂຄງການ ຕ້ອງອອກໃບຢັ້ງຢືນ ຕາມການສະເໜີຂອງ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ສົ່ງເງິນຄ້ຳປະກັນຄືນ ຕາມສັນຍາ.

## ພາກທີ IV
## ການຈັດສັນອາຊີບ

### ມາດຕາ 29 ປະເພດອາຊີບ ທີ່ຈັດສັນ

ຂະແໜງການກະສິກຳ ແລະ ປ່າໄມ້ ສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຄົ້ນຄວ້າ ແລະ ກຳນົດປະເພດອາຊີບ ໃນກຸ່ມເປົ້າໝາຍ ຕາມເງື່ອນໄຂຕົວຈິງ ຂອງປະເພດອາຊີບ ດັ່ງນີ້:

1. ການປູກຝັງ, ການລ້ຽງສັດ ແລະ ການປະມົງ;
2. ການປູກໄມ້ ແລະ ປົກປັກຮັກສາປ່າໄມ້;
3. ການບໍລິການ, ການຄ້າຂາຍສິນຄ້າ, ການທ່ອງທ່ຽວ;
4. ການຜະລິດສິນຄ້າອຸດສາຫະກຳ ແລະ ຫັດຖະກຳ ຂອງຄອບຄົວ;
5. ການປະກອບອາຊີບກຳມະກອນ ຢູ່ໂຮງງານ ຫຼື ໂຄງການພັດທະນາ, ການຜະລິດສິນຄ້າໃນໂຮງງານ ຫຼື ສະຖານປະກອບການຂະໜາດນ້ອຍ, ການປະກອບເຄື່ອງມື, ອຸປະກອນ ຫຼື ວັດສະດຸ ທີ່ຜູ້ວ່າຈ້າງນຳມາໃຫ້ຜະລິດ ລວມທັງການຮັບຕໍ່ວຽກບາງຂັ້ນຕອນຂອງການຜະລິດມາດຳເນີນການ.

### ມາດຕາ 30 ເຂດ ແລະ ເງື່ອນໄຂ ຜູ້ໄດ້ຮັບການຈັດສັນອາຊີບ

ຜູ້ໄດ້ຮັບການຈັດສັນອາຊີບ ແມ່ນ ບຸກຄົນ ຫຼື ຄອບຄົວ ທີ່ຢູ່ໃນເຂດ ແລະ ເງື່ອນໄຂ ດັ່ງດຽວກັນກັບຜູ້ໄດ້ຮັບການຈັດສັນພູມລຳເນົາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ 17 ຂອງກົດໝາຍສະບັບນີ້.

### ມາດຕາ 31 ບູລິມະສິດການຈັດສັນອາຊີບ

ການຈັດສັນອາຊີບ ໃຫ້ບຸກຄົນ ຫຼື ຄອບຄົວ ທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາ ຕ້ອງປະຕິບັດຕາມບູລິມະສິດ ດັ່ງນີ້:

1. ຄອບຄົວ ທີ່ມີຄົນພິການ, ເສຍອົງຄະ ແລະ ອາຍຸສູງ ທີ່ມີຄວາມສ່ຽງຈະທຸກຍາກ ລົງຫຼາຍກວ່າກຸ່ມຄົນອື່ນ;
2. ຄອບຄົວ ຫຼື ບຸກຄົນ ທຸກຍາກ, ບໍ່ມີອາຊີບໝັ້ນຄົງ;
3. ຄອບຄົວ ຫຼື ບຸກຄົນ ທີ່ມີເງື່ອນໄຂເໝາະສົມໃນການສ້າງເປັນຄອບຄົວຕົວແບບ ໃນການຜະລິດກະສິກຳ, ຫັດຖະກຳ, ການຄ້າ ແລະ ການບໍລິການ.

### ມາດຕາ 32 ຂັ້ນຕອນການຈັດສັນອາຊີບ

ຂັ້ນຕອນການຈັດສັນອາຊີບ ມີ ດັ່ງນີ້:

1. ການເກັບກຳຂໍ້ມູນ;
2. ການປະເມີນທາງເລືອກອາຊີບ;
3. ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ;
4. ການຊຸກຍູ້ສົ່ງເສີມດ້ານວິຊາການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ;

5. ການສ້າງນັກພັດທະນາກັບທີ່ ແລະ ສ້າງຄອບຄົວຕົວແບບ;
6. ການຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດການຈັດສັນອາຊີບ;
7. ການສິ້ນສຸດ ໂຄງການຈັດສັນອາຊີບ.

**ມາດຕາ 33 ການເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນດ້ານອາຊີບ ຂອງຜູ້ໄດ້ຮັບຜົນກະທົບ ຈາກການພັດທະນາໃຫ້ດຳເນີນໄປພ້ອມກັນກັບການສຶກສາ ຄົ້ນຄວ້າໂຄງການຈັດສັນພູມລຳເນົາ.

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ເປັນຜູ້ເກັບກຳຂໍ້ມູນດ້ານອາຊີບ ແລ້ວສະເໜີຕໍ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ໃນຂັ້ນຂອງຕົນ ເພື່ອພິຈາລະນາ.

**ມາດຕາ 34 ການປະເມີນທາງເລືອກອາຊີບ**

ການປະເມີນທາງເລືອກອາຊີບ ແມ່ນ ການຄົ້ນຄວ້າອາຊີບເກົ່າທີ່ມີພື້ນຖານ ຫຼື ອາຊີບໃໝ່ ເພື່ອກຳນົດກິດຈະການແຕ່ລະປະເພດອາຊີບທີ່ເໝາະສົມ ຂອງຜູ້ໄດ້ຮັບຜົນກະທົບຈາກ ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ.

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ເປັນຜູ້ປະເມີນທາງເລືອກອາຊີບແລ້ວ ສະເໜີຕໍ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ໃນຂັ້ນຂອງຕົນ ເພື່ອພິຈາລະນາ.

**ມາດຕາ 35 ການຝຶກອົບຮົມ ແລະ ສ້າງຂີດຄວາມສາມາດ**

ພາຍຫຼັງສຳເລັດການປະເມີນທາງເລືອກອາຊີບ ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງດຳເນີນການຝຶກອົບຮົມ ໃຫ້ຜູ້ໄດ້ຮັບຜົນກະທົບຈາກໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອສ້າງຂີດຄວາມສາມາດດ້ານການສ້າງຕັ້ງ ແລະ ບໍລິຫານກຸ່ມການຜະລິດ, ເຕັກນິກການຜະລິດ, ການບົວລະບັດຮັກສາ, ການເກັບກູ້, ປຸງແຕ່ງສ້າງມູນຄ່າເພີ່ມ, ການຕະຫຼາດ ແລະ ການອະນຸລັກສິ່ງແວດລ້ອມ ລວມທັງການຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.

**ມາດຕາ 36 ການຊຸກຍູ້ສົ່ງເສີມດ້ານວິຊາການ, ການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບກັບ ຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງ ແລະ ປະຕິບັດແຜນການຊຸກຍູ້ສົ່ງເສີມດ້ານວິຊາການ ເປັນຕົ້ນ ການປູກ, ການລ້ຽງ, ຫັດຖະກຳ, ການຄ້າ, ການບໍລິການ ລວມທັງການເຂົ້າເຖິງແຫຼ່ງທຶນ ແລະ ການຕະຫຼາດ ດ້ວຍການເຜີຍແຜ່, ແນະນຳເຕັກນິກວິຊາການ ແລະ ນຳພາປະຊາຊົນເຮັດຕົວຈິງ ຈົນກວ່າປະຊາຊົນຈະມີຄວາມສາມາດເພິ່ງຕົນເອງໄດ້ ໃນເງື່ອນໄຂດຳລົງຊີວິດຂັ້ນພື້ນຖານ.

**ມາດຕາ 37 ການສ້າງນັກພັດທະນາກັບທີ່ ແລະ ສ້າງຄອບຄົວຕົວແບບ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບກັບຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ສ້າງບຸກຄົນທີ່ມີຄວາມຮູ້ພື້ນຖານ, ເງື່ອນໄຂເໝາະສົມ ແລະ ມີຄວາມສະໝັກໃຈໃນປະເພດອາຊີບໃດໜຶ່ງ ຕາມແບບແຜນທາງດ້ານເຕັກນິກ ເພື່ອສ້າງເປັນນັກພັດທະນາກັບທີ່ ພ້ອມທັງສ້າງຄອບຄົວທີ່ມີທ່າແຮງພື້ນຖານ ແລະ ໜໍ່ແໜງດ້ານການພັດທະນາ ເປັນຕົ້ນ ການປູກ, ການລ້ຽງ, ຫັດຖະກໍາ, ການຄ້າ, ການບໍລິການ ໃຫ້ກາຍເປັນຄອບຄົວຕົວແບບ.

**ມາດຕາ 38 ການຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດການຈັດສັນອາຊີບ**

ເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ ຕ້ອງປະສານສົມທົບກັບ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນຂັ້ນຂອງຕົນ ດໍາເນີນການຕິດຕາມ ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຈັດສັນອາຊີບ ໃນແຕ່ລະໄລຍະ ເພື່ອຫາວິທີແກ້ໄຂ ແລະ ສືບຕໍ່ສົ່ງເສີມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 39 ການສິ້ນສຸດ ໂຄງການຈັດສັນອາຊີບ**

ໂຄງການຈັດສັນອາຊີບ ຈະສິ້ນສຸດພາຍຫຼັງ ທີ່ຜູ້ພັດທະນາໂຄງການ ໄດ້ສໍາເລັດການຈັດຕັ້ງປະຕິບັດແຜນການຈັດສັນອາຊີບ ແລະ ໄດ້ຜ່ານການປະເມີນຂອງຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ເຫັນວ່າຜູ້ໄດ້ຮັບຜົນກະທົບ ມີອາຊີບທີ່ໝັ້ນຄົງ, ມີລາຍຮັບ ແລະ ມີຊີວິດການເປັນຢູ່ດີຂຶ້ນ.

ຂະແໜງການກະສິກໍາ ແລະ ປ່າໄມ້ ຕ້ອງອອກໃບຢັ້ງຢືນ ຕາມການສະເໜີຂອງຄະນະກໍາມະການຈັດສັນພູມລໍາເນົາ ແລະ ອາຊີບ.

## ພາກທີ V
## ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ

**ມາດຕາ 40 ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ**

ຂະແໜງການກະສິກໍາ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ສ້າງໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ໃນສະເພາະໜ້າ ແລະ ຍາວນານ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ການດຸ່ນດ່ຽງຈໍານວນປະຊາກອນ ແລະ ກໍາລັງແຮງງານໃຫ້ເໝາະສົມກັບພື້ນທີ່ ລວມທັງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ໃນແຕ່ລະທ້ອງຖິ່ນ ແລະເຂດແຄ້ວນ.

ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ມີ ສາມ ຂັ້ນ ດັ່ງນີ້:

1. ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ຂັ້ນສູນກາງ;
2. ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ຂັ້ນແຂວງ;
3. ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ຂັ້ນເມືອງ.

**ມາດຕາ 41 ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ**

ໂຄງການຈັດສັນພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ ແມ່ນ ໂຄງການຈັດສັນ ທີ່ມີການຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ຫຼາຍກວ່າ ໜຶ່ງຮ້ອຍ ຄອບຄົວ ຫາ ຫ້າຮ້ອຍ ຄອບຄົວ ແມ່ນ ລັດຖະບານ ເປັນຜູ້ພິຈາລະນາ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້.

ໃນກໍລະນີ ມີການຍົກຍ້າຍປະຊາຊົນຫຼາຍກວ່າ ຫ້າຮ້ອຍ ຄອບຄົວ ຂຶ້ນໄປ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ພິຈາລະນາ ຕາມການສະເໜີຂອງລັດຖະບານ.

**ມາດຕາ 42 ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ**

ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ ແມ່ນ ໂຄງການຈັດສັນ ທີ່ມີການຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ແຕ່ ຊາວ ຄອບຄົວ ຫາ ໜຶ່ງຮ້ອຍ ຄອບຄົວ ພາຍໃນເມືອງ ຫຼື ຈາກ ເມືອງ, ເທດສະບານ, ນະຄອນໜຶ່ງ ຫາ ເມືອງ, ເທດສະບານ, ນະຄອນອື່ນ ພາຍໃນແຂວງ ແມ່ນ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເປັນຜູ້ພິຈາລະນາ ຕາມການສະເໜີ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ໃນກໍລະນີໂຄງການຈັດສັນຍົກຍ້າຍປະຊາຊົນຈາກ ແຂວງໜຶ່ງ ຫາ ແຂວງອື່ນ ຈຳນວນຕໍ່າກວ່າ ຊາວ ຄອບຄົວ ບົນພື້ນຖານການເຫັນດີຂອງ ເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ ທີ່ກ່ຽວຂ້ອງ.

**ມາດຕາ 43 ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ**

ໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ ແມ່ນ ໂຄງການຈັດສັນ ທີ່ມີການຫຍັບຍ້າຍ ຫຼື ຍົກຍ້າຍປະຊາຊົນ ຕໍ່າກວ່າ ຊາວ ຄອບຄົວລົງມາ ພາຍໃນບ້ານ ຫຼື ຈາກບ້ານໜຶ່ງ ຫາ ບ້ານອື່ນ ພາຍໃນເມືອງ, ເທດສະບານ, ນະຄອນ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ພິຈາລະນາ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍການເຫັນດີຈາກນາຍບ້ານທີ່ກ່ຽວຂ້ອງ;

ໃນກໍລະນີໂຄງການຈັດສັນຍົກຍ້າຍປະຊາຊົນຈາກ ເມືອງ, ເທດສະບານ, ນະຄອນໜຶ່ງ ຫາ ເມືອງ, ເທດສະບານ, ນະຄອນອື່ນ ພາຍໃນແຂວງ ຈຳນວນຕໍ່າກວ່າ ຊາວ ຄອບຄົວ ບົນພື້ນຖານການເຫັນດີຂອງ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ທີ່ກ່ຽວຂ້ອງ.

## ພາກທີ VI
## ສິດ ແລະ ພັນທະ ຂອງຜູ້ພັດທະນາ
## ໂຄງການ ແລະ ຜູ້ໄດ້ຮັບການຈັດສັນ ພູມລຳເນົາ ແລະ ອາຊີບ

**ມາດຕາ 44 ສິດຂອງຜູ້ພັດທະນາໂຄງການ**

ຜູ້ພັດທະນາໂຄງການ ມີສິດ ດັ່ງນີ້:

1. ໄດ້ຮັບການຮ່ວມມືຈາກຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາໂຄງການຈັດສັນພູມລຳເນົາ ແລະ ອາຊີບ;

2. ຕິດຕາມ ກວດກາ ດ້ວຍຕົນເອງ ໃນການສຶກສາຄົ້ນຄວ້າການຈັດສັນ ພູມລໍາເນົາ ແລະ ອາຊີບ ລວມທັງການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ສະເໜີເຈົ້າຂອງໂຄງການ, ຂະແໜງການ ຫຼື ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂບັນຫາ ທີ່ຕິດພັນກັບການຈັດສັນ ພູມລໍາເນົາ ແລະ ອາຊີບ;

4. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 45 ພັນທະຂອງຜູ້ພັດທະນາໂຄງການ

ຜູ້ພັດທະນາໂຄງການ ມີ ພັນທະ ດັ່ງນີ້:

1. ສ້າງບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງສັງຄົມ ແລະ ທໍາມະຊາດ ລວມທັງແຜນຄຸ້ມຄອງ ຕິດຕາມ ແລະ ກວດກາ ໃຫ້ຖືກຕ້ອງສອດຄ່ອງ ຕາມເຕັກນິກວິຊາການ;

2. ປະຕິບັດພັນທະດ້ານສິ່ງແວດລ້ອມທາງສັງຄົມ ແລະ ທໍາມະຊາດ ຢ່າງເຂັ້ມງວດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ;

3. ສ້າງແຜນການທົດແທນຄ່າເສຍຫາຍ, ແຜນຈັດສັນພູມລໍາເນົາ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບ ບົນພື້ນຖານຮັບປະກັນໃຫ້ມີງົບປະມານຢ່າງພຽງພໍ ເພື່ອຄິດໄລ່ເຂົ້າໃນມູນຄ່າຂອງໂຄງການ;

4. ຮັບຜິດຊອບໂດຍກົງ ແລະ ຈັດຕັ້ງປະຕິບັດແຜນການທົດແທນຄ່າເສຍຫາຍ, ແຜນຈັດສັນພູມລໍາເນົາ ແລະ ແຜນການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ;

5. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຈາກການບໍ່ປະຕິບັດຕາມແຜນການຫຍັບຍ້າຍ ຫຼື ຍົກຍ້າຍ;

6. ຮັບຜິດຊອບຄ່າໃຊ້ຈ່າຍສໍາລັບຜູ້ຊ່ຽວຊານ, ອົງການທີ່ມີບົດຮຽນ ແລະ ປະສົບການ ທັງພາຍໃນ ຫຼື ຕ່າງປະເທດ ລວມທັງເຈົ້າຂອງໂຄງການ ແລະ ການຈັດຕັ້ງລັດ ມາດໍາເນີນການຕິດຕາມ ກວດກາ ແລະ ຕີລາຄາຜົນສໍາເລັດ ຂອງວຽກງານດັ່ງກ່າວ;

7. ຮັບຜິດຊອບຕໍ່ຂໍ້ມູນທີ່ຕົນສ້າງຂຶ້ນ ພ້ອມທັງສະໜອງ ແລະ ເປີດເຜີຍຂໍ້ມູນທີ່ຕິດພັນກັບການປະຕິບັດໂຄງການພັດທະນາຂອງຕົນ ໃຫ້ແກ່ການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ແລະ ຕໍ່ສາທາລະນະ;

8. ວາງເງິນຄໍ້າປະກັນ ຈໍານວນ ສິບສ່ວນຮ້ອຍ ຂອງມູນຄ່າທັງໝົດທີ່ນໍາໃຊ້ເຂົ້າໃນການຈັດສັນພູມລໍາເນົາພາຍໃນເວລາ ໜຶ່ງ ເດືອນ ກ່ອນວັນມອບ-ຮັບໂຄງການຈັດສັນພູມລໍາເນົາ;

9. ລາຍງານສະພາບການຕ່າງໆ ທີ່ພົວພັນກັບການພັດທະນາໂຄງການຂອງຕົນ ໃຫ້ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ທີ່ຕົນຂຶ້ນກັບ ເປັນແຕ່ລະໄລຍະ;

10. ສ້າງ, ພັດທະນາສີມືແຮງງານ ແລະ ນໍາໃຊ້ແຮງງານພາຍໃນທ້ອງຖິ່ນ;

11. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 46 ສິດຂອງຜູ້ໄດ້ຮັບການຈັດສັນພູມລໍາເນົາ**

ຜູ້ໄດ້ຮັບການຈັດສັນພູມລໍາເນົາ ມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ ລວມທັງຄວາມຄືບໜ້າໃນການຈັດສັນ, ທົດແທນຄ່າເສຍຫາຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ຕະຫຼອດໄລຍະປະຕິບັດໂຄງການ;

2. ໄດ້ຮັບການທົດແທນຄ່າເສຍຫາຍ, ການຈັດສັນຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ ຕາມແຜນການທີ່ໄດ້ຮັບຮອງເປັນທາງການ;

3. ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາແກ້ໄຂບັນຫາທີ່ຕິດພັນກັບໂຄງການພັດທະນາ;

4. ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄໍາຄິດຄໍາເຫັນ ຕໍ່ແຜນການຈັດສັນພູມລໍາເນົາ, ການທົດແທນຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່;

5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 47 ພັນທະຂອງຜູ້ໄດ້ຮັບການຈັດສັນພູມລໍາເນົາ**

ຜູ້ໄດ້ຮັບການຈັດສັນພູມລໍາເນົາ ມີ ພັນທະ ດັ່ງນີ້:

1. ສະໜອງຂໍ້ມູນໃຫ້ຊັດເຈນ, ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນຂອງຕົນ;

2. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດແຜນການຈັດສັນພູມລໍາເນົາ, ການທົດແທນຄ່າເສຍຫາຍ, ການຟື້ນຟູຊີວິດການເປັນຢູ່ ແລະ ການແກ້ໄຂຂໍ້ສະເໜີຂອງຕົນ;

3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 48 ສິດຂອງຜູ້ໄດ້ຮັບການຈັດສັນອາຊີບ**

ຜູ້ໄດ້ຮັບການຈັດສັນອາຊີບ ມີ ສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ ແລະ ຜົນກະທົບຕໍ່ອາຊີບຂອງຕົນ;

2. ເລືອກອາຊີບທີ່ຕົນມີພື້ນຖານ ຫຼື ອາຊີບໃໝ່ ຕາມທ່າແຮງ;

3. ໄດ້ຮັບບູລິມະສິດໃນການເຂົ້າເຮັດວຽກນໍາໂຄງການ;

4. ໄດ້ຮັບການສົ່ງເສີມທາງດ້ານເຕັກນິກວິຊາການໃນການຍົກລະດັບອາຊີບຂອງຕົນ, ການເຂົ້າເຖິງແຫຼ່ງທຶນ ແລະ ສົ່ງເສີມການຕະຫຼາດ;

5. ສະເໜີເປັນລາຍລັກອັກສອນຕໍ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ເພື່ອພິຈາລະນາ ແກ້ໄຂບັນຫາທີ່ຕິດພັນກັບອາຊີບຂອງຕົນ;

6. ເຂົ້າຮ່ວມກອງປະຊຸມປຶກສາຫາລື ປະກອບຄໍາຄິດຄໍາເຫັນ ຕໍ່ແຜນການຈັດສັນອາຊີບ;

7. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 49 ພັນທະຂອງຜູ້ໄດ້ຮັບການຈັດສັນອາຊີບ**

ຜູ້ໄດ້ຮັບການຈັດສັນອາຊີບ ມີ ພັນທະ ດັ່ງນີ້:

1. ສະໜອງຂໍ້ມູນກ່ຽວກັບອາຊີບຂອງຕົນ ໃຫ້ຊັດເຈນ ແລະ ຖືກຕ້ອງຕາມຄວາມເປັນຈິງ ພ້ອມທັງຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນຂອງຕົນ;

2. ໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ, ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຈັດສັນອາຊີບ;

3. ເປັນເຈົ້າການ, ບຸກບືນຜ່ານຜ່າຄວາມຫຍຸ້ງຍາກ ແລະ ດຸໝັ່ນໃນການປະກອບອາຊີບ ເພື່ອເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 50 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ສະໜອງຂໍ້ມູນ ກ່ຽວກັບພູມລໍາເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງກັບຄວາມເປັນຈິງ;

2. ມີການປະພຶດ ທີ່ສະແດງອອກເຖິງແນວຄິດຄັບແຄບ, ເມີນເສີຍ, ແບ່ງແຍກລະຫວ່າງເຜົ່າ ແລະ ສາສະໜາ, ເຫັນແກ່ທ້ອງຖິ່ນ ແລະ ເຜົ່າຕົນເອງ;

3. ເຄື່ອນຍ້າຍ ຫຼື ຈັບຈອງພູມລໍາເນົາ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ໂຄສະນາຕ້ານແນວທາງ ນະໂຍບາຍ, ສ້າງຄວາມປັ່ນປ່ວນ, ຍຸແຍ່, ນາບຂູ່, ກົດໜ່ວງ ຖ່ວງດຶງ, ສ້າງອຸປະສັກ ຫຼື ຂັດຂວາງຕໍ່ການປະຕິບັດແຜນການຫຍັບຍ້າຍ ຫຼື ຍົກຍ້າຍຈັດສັນພູມລໍາເນົາ ແລະ ການປະຕິບັດໜ້າທີ່ ຂອງເຈົ້າຂອງໂຄງການ ຫຼື ຜູ້ພັດທະນາໂຄງການ;

5. ໃຫ້ ຫຼື ເປັນສື່ກາງ ໃນການໃຫ້ ຫຼື ຮັບສິນບົນ;

6. ດໍາເນີນການຈັດສັນພູມລໍາເນົາ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 51 ຂໍ້ຫ້າມສໍາລັບພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ**

ຫ້າມພະນັກງານ, ເຈົ້າຂອງໂຄງການ ແລະ ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ຫຼື ຕໍາແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ ຖ່ວງດຶງ ຫຼື ຮຽກ ເອົາສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ໄດ້ຮັບຜົນກະທົບ;

2. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ບິດເບືອນຂໍ້ມູນ, ປອມແປງເອກະສານ ຫຼື ອອກເອກະສານໂດຍບໍ່ຖືກຕ້ອງ;

4. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ບໍ່ມີຄວາມຍຸຕິທຳ ຫຼື ຂາດຄວາມຮັບຜິດຊອບ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ບຸກຄົນ ຫຼື ຜູ້ໄດ້ຮັບຜົນກະທົບ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 52 ຂໍ້ຫ້າມສຳລັບຜູ້ພັດທະນາໂຄງການ**

ຫ້າມຜູ້ພັດທະນາໂຄງການ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການສຳຫຼວດ ຫຼື ສຶກສາຄົ້ນຄວ້າໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຖ່ວງດຶງ ຫຼື ແກ່ຍາວເວລາ ການປະຕິບັດແຜນການຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;

3. ນຳໃຊ້ ຫຼື ແຈ້ງຂໍ້ມູນກ່ຽວກັບການສຳຫຼວດ ແລະ ສຶກສາຄົ້ນຄວ້າໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ໃຫ້ສິນບົນພະນັກງານ, ເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ປະຊາຊົນ;

5. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແລະ ປະຊາຊົນ;

6. ລະເມີດສິດ ແລະ ໜ້າທີ່ ຂອງເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ;

7. ປະຕິບັດບໍ່ຖືກຕ້ອງ ຕາມແຜນການ ຫຍັບຍ້າຍ ຫຼື ຍົກຍ້າຍ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ ຂອງຜູ້ໄດ້ຮັບຜົນກະທົບ ຕາມທີ່ໄດ້ຕົກລົງກັບເຈົ້າຂອງໂຄງການ, ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມສຳລັບຜູ້ໄດ້ຮັບການຈັດສັນ ພູມລຳເນົາ ແລະ ອາຊີບ**

ຫ້າມຜູ້ໄດ້ຮັບການຈັດສັນ ພູມລຳເນົາ ແລະ ອາຊີບ ມີພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງການປະຕິບັດໜ້າທີ່ ຫຼື ບໍ່ໃຫ້ການຮ່ວມມື ແກ່ພະນັກງານທີ່ກ່ຽວຂ້ອງກັບການຈັດສັນ ພູມລຳເນົາ ແລະ ອາຊີບ;

2. ຍົກຍ້າຍ ກັບຄືນໄປບ່ອນຢູ່ເດີມ ຫຼື ຢູ່ບ່ອນໃໝ່ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສະໜອງຂໍ້ມູນ ກ່ຽວກັບພູມລຳເນົາ ແລະ ອາຊີບຂອງຕົນ ໂດຍບໍ່ຖືກຕ້ອງຕາມຄວາມເປັນຈິງ;

4. ປຸກລະດົມ, ສ້າງກຸ່ມກ້ອນ, ສ້າງຄວາມແຕກແຍກ ພາຍໃນກຸ່ມຜູ້ໄດ້ຮັບການຈັດສັນ ຫຼື ບ້ານເຈົ້າພາບ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 54 ຮູບການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ.

**ມາດຕາ 55 ການປະນີປະນອມ ຫຼື ການໄກ່ເກ່ຍ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ, ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ, ປະນີປະນອມ ຫຼື ໄກ່ເກ່ຍກັນ.

**ມາດຕາ 56 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ, ຄູ່ກໍລະນີ ມີສິດສະເໜີຕໍ່ອົງການຄຸ້ມຄອງວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 57 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການຈັດສັນ ພູມລໍາເນົາ ແລະ ອາຊີບ, ຄູ່ກໍລະນີ ມີສິດສະເໜີໃຫ້ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມກົດໝາຍ.

**ມາດຕາ 58 ການຕັດສິນຂອງສານປະຊາຊົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ, ຄູ່ກໍລະນີ ຝ່າຍໃດໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

## ພາກທີ IX
## ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ

**ມາດຕາ 59 ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ**

ຄະນະກໍາມະການຈັດສັນ ພູມລໍາເນົາ ແລະ ອາຊີບ ແມ່ນ ການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດເປັນເສນາທິການ ຊ່ວຍລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໃນການ ຄົ້ນຄວ້າ, ຕິດຕາມ ກວດກາ ແລະ ປະເມີນຜົນວຽກງານ ກ່ຽວກັບການຈັດສັນ ພູມລໍາເນົາ ແລະ ອາຊີບ.

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ມີ ສາມ ຂັ້ນ ດັ່ງນີ້:

1. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ;
2. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ;
3. ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ.

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ ແມ່ນນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ.

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ ແມ່ນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງ ຕາມການສະເໜີຂອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ.

### ມາດຕາ 60 ໂຄງປະກອບຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ ປະກອບດ້ວຍ:

1. ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເປັນປະທານ;
2. ຮອງລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຮອງປະທານ;
3. ຮອງລັດຖະມົນຕີກະຊວງພາຍໃນ ເປັນຮອງປະທານ;
4. ຮອງລັດຖະມົນຕີກະຊວງການເງິນ ເປັນຮອງປະທານ;
5. ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
6. ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
7. ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
8. ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
9. ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
10. ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນຄະນະ;
11. ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນຄະນະ;
12. ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
13. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຄະນະ;
14. ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
15. ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນຄະນະ;
16. ຮອງປະທານສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເປັນຄະນະ;
17. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ທີ່ກ່ຽວຂ້ອງ ເປັນຄະນະ.

**ມາດຕາ 61 ໂຄງປະກອບຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ**

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ ປະກອບດ້ວຍ:

1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເປັນປະທານ;
2. ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ເປັນຮອງປະທານ;
3. ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຮອງປະທານ;
4. ຫົວໜ້າພະແນກພາຍໃນ ເປັນຮອງປະທານ;
5. ຫົວໜ້າພະແນກການເງິນ ເປັນຮອງປະທານ;
6. ຫົວໜ້າພະແນກແຜນການ ແລະ ການລົງທຶນ ເປັນຮອງປະທານ;
7. ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;
8. ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
9. ຮອງຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ເປັນຄະນະ;
10. ຮອງຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
11. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຄະນະ;
12. ຮອງຫົວໜ້າພະແນກສາທາລະນະສຸກ ເປັນຄະນະ;
13. ຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;
14. ຮອງຫົວໜ້າກອງບັນຊາການທະຫານແຂວງ, ນະຄອນຫຼວງ ເປັນຄະນະ;
15. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນຫຼວງ ເປັນຄະນະ;
16. ຮອງຫົວໜ້າຄະນະໂຄສະນາອົບຮົມແຂວງ, ນະຄອນຫຼວງ ເປັນຄະນະ;
17. ຮອງປະທານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ແຂວງ, ນະຄອນຫຼວງ ເປັນຄະນະ;
18. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ທີ່ກ່ຽວຂ້ອງ ເປັນຄະນະ.

**ມາດຕາ 62 ໂຄງປະກອບຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ**

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ ປະກອບດ້ວຍ:

1. ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເປັນປະທານ;
2. ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເປັນຮອງປະທານ;
3. ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຮອງປະທານ;
4. ຫົວໜ້າຫ້ອງການພາຍໃນ ເປັນຮອງປະທານ;
5. ຫົວໜ້າຫ້ອງການການເງິນ ເປັນຮອງປະທານ;
6. ຫົວໜ້າຫ້ອງການແຜນການ ແລະ ການລົງທຶນ ເປັນຮອງປະທານ;
7. ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະ;

8. ຮອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເປັນຄະນະ;

9. ຮອງຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເປັນຄະນະ;

10. ຮອງຫົວໜ້າຫ້ອງການໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

11. ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເປັນຄະນະ;

12. ຮອງຫົວໜ້າຫ້ອງການສາທາລະນະສຸກ ເປັນຄະນະ;

13. ຮອງຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ;

14. ຮອງຫົວໜ້າກອງບັນຊາການທະຫານເມືອງ, ເທດສະບານ, ນະຄອນ ເປັນຄະນະ;

15. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ, ນະຄອນ ເປັນຄະນະ;

16. ຮອງຫົວໜ້າຄະນະໂຄສະນາອົບຮົມເມືອງ, ເທດສະບານ, ນະຄອນ ເປັນຄະນະ;

17. ຮອງປະທານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເມືອງ, ເທດສະບານ, ນະຄອນ ເປັນຄະນະ;

18. ນາຍບ້ານ ທີ່ກ່ຽວຂ້ອງ ເປັນຄະນະ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ**

ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງການຈັດຕັ້ງປະຕິບັດແຜນການຈັດສັນ ພູມລຳເນົາ ແລະ ອາຊີບ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ປະຊາຊົນຜູ້ໄດ້ຮັບຜົນກະທົບຈາກໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ, ປະຊາຊົນບ້ານເຈົ້າພາບ ແລະ ພາກສ່ວນກ່ຽວຂ້ອງ ໃຫ້ເຂົ້າໃຈຕໍ່ເຫດຜົນຄວາມຈຳເປັນ ແລະ ທິດທາງແຜນການຂອງການຈັດສັນ ພູມລຳເນົາ ແລະ ອາຊີບ;

3. ພິຈາລະນາແຜນການຈັດສັນ ພູມລຳເນົາ ແລະ ອາຊີບ ແລ້ວສະເໜີຂັ້ນເທິງຂອງຕົນຮັບຮອງ;

4. ກຳນົດນະໂຍບາຍ ແລະ ຫົວໜ່ວຍການທົດແທນຄ່າເສຍຫາຍ, ກຳນົດໄລຍະເວລາ ການພັດທະນາເຂດຈັດສັນ, ໄລຍະເວລາຂ້າມຜ່ານ ແລະ ການຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໂຄງການ;

5. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີ ກ່ຽວກັບການທົດແທນຄ່າເສຍຫາຍ, ການຫຍັບຍ້າຍ ຫຼື ຍົກຍ້າຍ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນຜູ້ໄດ້ຮັບຜົນກະທົບໃຫ້ທັນກຳນົດເວລາ;

6. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

7. ສະໜອງຂໍ້ມູນ ຂ່າວສານ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມ ກ່ຽວກັບໂຄງການພັດທະນາ, ຜົນປະໂຫຍດ ແລະ ຜົນກະທົບທີ່ຕົນຈະໄດ້ຮັບ ລວມທັງຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ແຕ່ລະໄລຍະ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 64 ກອງເລຂາຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ**

ກອງເລຂາ ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ແມ່ນ ການຈັດຕັ້ງທີ່ປະຈຳການ, ມີພາລະບົດບາດເປັນເສນາທິການໃຫ້ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນຂອງຕົນ ຊຶ່ງປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນກົມພັດທະນາຊົນນະບົດ ແລະ ສະຫະກອນ, ກະຊວງກະສິກຳ ແລະ ປ່າໄມ້;

2. ຂັ້ນແຂວງ ແມ່ນຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ;

3. ຂັ້ນເມືອງ ແມ່ນໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ.

**ມາດຕາ 65 ສິດ ແລະ ໜ້າທີ່ຂອງກອງເລຂາຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ**

ກອງເລຂາຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ, ສັງລວມ ແລະ ສະເໜີແຜນການຈັດສັນ ພູມລຳເນົາ ແລະ ອາຊີບ ຕໍ່ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນຂອງຕົນພິຈາລະນາ;

2. ຄົ້ນຄວ້າ ນະໂຍບາຍ, ຫຼືວໜ່ວຍການທົດແທນຄ່າເສຍຫາຍ, ໄລຍະເວລາການພັດທະນາເຂດຈັດສັນ, ໄລຍະຂ້າມຜ່ານ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບຈາກໂຄງການ;

3. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ຂອງຜູ້ໄດ້ຮັບຜົນກະທົບ ແລະ ຜູ້ມີສ່ວນຮ່ວມ ກ່ຽວກັບໂຄງການພັດທະນາ ລວມທັງລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການພັດທະນາ ໃຫ້ຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນຂອງຕົນ ໃນແຕ່ລະໄລຍະ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ
## ໝວດທີ 1
## ການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ

**ມາດຕາ 66 ອົງການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຢ່າງລວມສູນ ແລະ ເປັນເອກພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 67 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ກະຊວງກະສິກຳ ແລະ ປ່າ ໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ແລະ ນິຕິກຳອື່ນກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;
4. ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;
5. ປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ກຳນົດເຂດ, ພື້ນທີ່ຮອງຮັບການຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອສ້າງເປັນໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ;
6. ຄົ້ນຄວ້າ, ສັງລວມ, ຈັດລຽງບູລິມະສິດ ບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອນຳສະເໜີລັດຖະບານພິຈາລະນາ;
7. ຊີ້ນຳຄະນະກຳມະການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນສູນກາງ ໃນການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;
8. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

9. ພິຈາລະນາ ແລະ ອອກໃບຢັ້ງຢືນ ພາຍຫຼັງສິ້ນສຸດໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ;

10. ປະສານສົມທົບກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

11. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລະກອນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

12. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

13. ພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

14. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 68 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

2. ໂຄສະນາ, ເຜີຍແຜ່, ຊີ້ນຳ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ ກົດໝາຍ ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາອອກ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

4. ສຳຫຼວດ, ເກັບກຳຂໍ້ມູນ ແລະ ສຶກສາຄົ້ນຄວ້າ ເຂດ ແລະ ພື້ນທີ່ຮອງຮັບການຈັດສັນ ເພື່ອສ້າງເປັນໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນແຂວງ;

5. ຄົ້ນຄວ້າ, ສັງລວມ, ຈັດລຽງບູລິມະສິດ ບັນດາໂຄງການລົງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ ແລະ ທຶນກູ້ຢືມຈາກຕ່າງປະເທດ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ເພື່ອນຳສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ;

6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານຈັດສັນ ພູມລຳ ເນົາ ແລະ ອາຊີບ;

7. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານກ່ຽວກັບການຈັດສັນ ພູມລຳເນົາ ແລະ ອາຊີບ;

8. ປະສານສົມທົບກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

9. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

10. ພົວພັນຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

2. ເຜີຍແຜ່, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

3. ສຳຫຼວດ, ເກັບກຳຂໍ້ມູນ ແລະ ສຶກສາຄົ້ນຄວ້າ ເຂດ ແລະ ພື້ນທີ່ຮອງຮັບການຈັດສັນ ເພື່ອສ້າງເປັນໂຄງການຈັດສັນ ພູມລຳເນົາ ແລະ ອາຊີບ ຂັ້ນເມືອງ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລະກອນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

5. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

6. ປະສານສົມທົບ ກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ ແລະ ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

7. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 ສິດ ແລະ ໜ້າທີ່ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

2. ເຜີຍແຜ່ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

3. ເຂົ້າຮ່ວມການສຳຫຼວດ, ເກັບກຳຂໍ້ມູນ ກ່ຽວກັບການຈັດສັນ ພູມລຳເນົາ ແລະ ອາຊີບ;

4. ປຸກລະດົມປະຊາຊົນພາຍໃນບ້ານ ໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກ ແກ່ພະນັກງານຈັດສັນ ພູມລໍາເນົາ ແລະ ອາຊີບ;

5. ເຂົ້າຮ່ວມໃນການໄກ່ເກ່ຍ ກ່ຽວກັບວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ພາຍໃນບ້ານຂອງຕົນ;

6. ສະຫຼຸບ, ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ໃນຂອບເຂດບ້ານຂອງຕົນ ໃຫ້ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ມາດຕາ 71 ສິດ ແລະ ໜ້າທີ່ຂອງກະຊວງອື່ນ ທີ່ກ່ຽວຂ້ອງ

ໃນການຄຸ້ມຄອງວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ກະຊວງອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກະຊວງແຜນການ ແລະ ການລົງທຶນ ມີສິດ ແລະ ໜ້າທີ່ ໃນການຄົ້ນຄວ້າ ພິຈາລະນາຈັດສັນໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ເຂົ້າໃນແຜນການພັດທະນາເສດຖະກິດ-ສັງຄົມ ຫ້າ ປີ ແລະ ປະຈໍາປີ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ; ຊີ້ນໍາຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເອົາໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ເຂົ້າໃນແຜນການພັດທະນາເສດຖະກິດ-ສັງຄົມ ຫ້າ ປີ ແລະ ປະຈໍາປີ ຂອງຂັ້ນແຂວງ, ຂັ້ນເມືອງ ເພື່ອສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ;

2. ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ໃນການຈັດສັນງົບປະມານໃຫ້ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ເຂົ້າໃນແຜນງົບປະມານແຫ່ງລັດ ຫ້າ ປີ ແລະ ປະຈໍາປີ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ; ຊີ້ນໍາຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ຈັດສັນງົບປະມານໃຫ້ໂຄງການຈັດສັນ ພູມລໍາເນົາ ແລະ ອາຊີບ ເຂົ້າໃນແຜນງົບປະມານແຫ່ງລັດ ຫ້າ ປີ ແລະ ປະຈໍາປີ ຂອງຂັ້ນແຂວງ, ຂັ້ນເມືອງ ເພື່ອສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ;

3. ກະຊວງ ພາຍໃນ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ, ແຮງງານ ແລະ ສະຫວັດດີການສັງຄົມ, ພະລັງງານ ແລະ ບໍ່ແຮ່, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ໃນການປະສານສົມທົບ ແລະ ຮ່ວມມື ກັບອົງການຄຸ້ມຄອງວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ມາດຕາ 72 ສິດ ແລະ ໜ້າທີ່ ຂອງອົງການປົກຄອງທ້ອງຖິ່ນ

ໃນການຄຸ້ມຄອງວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ກໍານົດເຂດ ທີ່ຈະໄດ້ຮັບການຈັດສັນພູມລໍາເນົາ ແລະ ເຂດພື້ນທີ່ຮອງຮັບການຈັດສັນ ພູມລໍາເນົາ ແລະ ອາຊີບ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້;

2. ຊີ້ນໍາບັນດາຂະແໜງການ, ອົງການ ໃນທ້ອງຖິ່ນຕົນ ເຂົ້າຮ່ວມຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລໍາເນົາ ແລະ ອາຊີບ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໃຫ້ແກ່ປະຊາຊົນໃນທ້ອງຖິ່ນຂອງຕົນ;

4. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

5. ປະສານສົມທົບ ແລະ ຮ່ວມມື ກັບອົງການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ

### ມາດຕາ 73 ອົງການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ

ອົງການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 66 ຂອງກົດໝາຍສະບັບນີ້.

ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

### ມາດຕາ 74 ເນື້ອໃນການກວດກາ

ການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ;

2. ການປະຕິບັດໜ້າທີ່ ຂອງເຈົ້າຂອງໂຄງການ, ຜູ້ພັດທະນາໂຄງການ ແລະ ພະນັກງານຈັດສັນ ພູມລຳເນົາ ແລະ ອາຊີບ;

3. ການສ້າງ ແລະ ປະຕິບັດແຜນການຈັດສັນ, ການທົດແທນຄ່າເສຍຫາຍ ແລະ ການຟື້ນຟູຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນກະທົບ;

4. ການນຳໃຊ້ງົບປະມານ ແລະ ການເງິນ ເຂົ້າໃນວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ.

### ມາດຕາ 75 ຮູບການການກວດກາ

ການກວດກາວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາແຕ່ລະຄັ້ງ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 76 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ວຽກງານຄຸ້ມຄອງ, ຕິດຕາມ ກວດກາການຈັດສັນ ພູມລຳເນົາ ແລະ ອາຊີບ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະ ນີເບົາ ຫຼື ໜັກ.

### ມາດຕາ 78 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

### ມາດຕາ 79 ມາດຕະການທາງວິໄນ

ພະນັກງານຈັດສັນ ພູມລຳເນົາ ແລະ ອາຊີບ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ມີລັກສະນະເບົາ, ບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳທີ່ບໍ່ຖືກຕ້ອງຂອງຕົນ ຈະຖືກລົງວິໄນ ຕາມລະບຽບການ ເປັນຕົ້ນ ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

### ມາດຕາ 80 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ບໍ່ເປັນການກະທຳຜິດທາງອາຍາ ຊຶ່ງກໍ່ຄວາມເສຍຫາຍທາງດ້ານຊັບສິນໃຫ້ແກ່ຜູ້ອື່ນຈະຖືກປັບໃໝ ໜຶ່ງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ.

ໃນກໍລະນີ ມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ຈະຖືກປັບໃໝ ສອງເທົ່າຕົວ ຂອງມູນຄ່າຄວາມເສຍຫາຍທັງໝົດ.

**ມາດຕາ 81 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 82 ມາດຕະການທາງອາຍາ**

ບຸກຄົນໃດ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 83 ງົບປະມານ**

ງົບປະມານໃນການຈັດຕັ້ງປະຕິບັດວຽກງານຈັດສັນ ພູມລຳເນົາ ແລະ ອາຊີບ ໄດ້ມາຈາກງົບປະມານແຫ່ງລັດ, ຜູ້ພັດທະນາໂຄງການ ແລະ ການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ລວມທັງການປະກອບສ່ວນຂອງປະຊາຊົນ.

**ມາດຕາ 84 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 85 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ



ປານີ ຢາທໍ່ຕູ້